**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ — ເລກທີ 1156 /ປທສ

ນະຄອນຫຼວງວຽງຈັນ, ວັນທີ 15 ມີນາ 2021

# ຂໍ້ຕົກລົງ

## ວ່າດ້ວຍ ການຮັບຮອງເອົາແຖບຄວາມຖີ່ວິທະຍຸສື່ສານ 850 MHz ເປັນແຖບຄວາມຖີ່ວິທະຍຸສື່ສານ ສຳລັບລະບົບໂທລະສັບເຄື່ອນທີ່

- ອີງຕາມ ກົດໝາຍ ວ່າດ້ວຍຄື້ນຄວາມຖີ່ວິທະຍຸສື່ສານ ສະບັບເລກທີ 17/ສພຊ, ລົງວັນທີ 05 ພຶດສະພາ 2017;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ສະບັບເລກທີ 303/ນຍ, ລົງວັນທີ 26 ກັນຍາ 2011;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ແຜນຜັງແຫ່ງຊາດ ກ່ຽວກັບຄື້ນຄວາມຖີ່ວິທະຍຸສື່ສານ ສະບັບເລກທີ 226/ນຍ, ລົງວັນທີ 11 ເມສາ 2020.

**ລັດຖະມົນຕີ ອອກຂໍ້ຕົກລົງ:**

### ມາດຕາ 1: ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບແຖບຄວາມຖີ່ວິທະຍຸສື່ສານ 850 MHz ເພື່ອເຮັດໃຫ້ການນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານດັ່ງກ່າວຖືກຕ້ອງ, ສອດຄ່ອງກັບລະບຽບການ, ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງສຸດ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

### ມາດຕາ 2: ການຈັດສັນແຖບຄວາມຖີ່ວິທະຍຸສື່ສານ 850 MHz

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຈັດສັນແຖບຄວາມຖີ່ວິທະຍຸສື່ສານ 850 MHz ເປັນແຖບຄວາມຖີ່ສຳລັບລະບົບໂທລະສັບເຄື່ອນທີ່ມາດຕະຖານ International Mobile Telecommunications (IMT) ຊຶ່ງລວມມີ IMT-2000, IMT-Advanced, IMT-2020 ແລະ ມາດຕະຖານ IMT ອື່ນ ຕາມການຮັບຮອງຂອງສະຫະພາບໂທລະຄົມມະນາຄົມສາກົນ (ITU).

### ມາດຕາ 3: ການກຳນົດແຖບຄວາມຖີ່ວິທະຍຸສື່ສານ 850 MHz

ແຖບຄວາມຖີ່ວິທະຍຸສື່ສານ 850 MHz ຖືກກຳນົດທາງດ້ານເຕັກນິກ, ມີລາຍລະອຽດດັ່ງລຸ່ມນີ້:

1. ນຳໃຊ້ເຕັກໂນໂລຊີທີ່ແບ່ງຕາມຄື້ນຄວາມຖີ່ວິທະຍຸສື່ສານເປັນສອງທິດທາງ ຂາຂຶ້ນ ແລະ ຂາລົງ ຫຼື Frequency Division Duplex (FDD);
2. ກຳນົດແຖບຄວາມຖີ່ວິທະຍຸສື່ສານ 824 - 834 MHz (10 MHz) ເປັນແຖບຄວາມຖີ່ວິທະຍຸສື່ສານຂາຂຶ້ນ ຊຶ່ງແບ່ງອອກເປັນ 2 ສ່ວນ (Block), ແຕ່ລະສ່ວນມີຄວາມກວ້າງ 5 MHz ເລີ່ມແຕ່ສ່ວນທີ B1 - B2;

3. ກຳນົດແຖບຄວາມຖີ່ວິທະຍຸສື່ສານ 869 - 879 MHz (10 MHz) ເປັນແຖບຄວາມຖີ່ວິທະຍຸສື່ສານຂາລົງ ຊຶ່ງແບ່ງອອກເປັນ 2 ສ່ວນ (Block), ແຕ່ລະສ່ວນມີຄວາມກວ້າງ 5 MHz ເລີ່ມແຕ່ສ່ວນທີ B1'- B2';
4. ກຳນົດແຖບຄວາມຖີ່ວິທະຍຸສື່ສານ 834 – 869 MHz (35 MHz) ເພື່ອເປັນໄລຍະຫ່າງລະຫວ່າງ ແຖບຄວາມຖີ່ວິທະຍຸສື່ສານຂາຂຶ້ນ ແລະ ຂາລົງ.

**ມາດຕາ 4: ແຜນວາດແຖບຄວາມຖີ່ວິທະຍຸສື່ສານ 850 MHz**




**ມາດຕາ 5: ການອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ**

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ອະນຸຍາດແຖບຄວາມຖີ່ວິທະຍຸສື່ສານ 850 MHz ດ້ວຍການອະນຸຍາດເປັນສ່ວນ (Block) ຫຼື ຫຼາຍສ່ວນທີ່ຕິດກັນ ແລະ ອະນຸຍາດເປັນຄູ່ຄື້ນຄວາມຖີ່ ລະຫວ່າງແຖບຄວາມຖີ່ວິທະຍຸສື່ສານຂາຂຶ້ນ ແລະ ຂາລົງ.

**ມາດຕາ 6: ພັນທະຂອງຜູ້ນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານ**

ຜູ້ນຳໃຊ້ແຖບຄວາມຖີ່ວິທະຍຸສື່ສານ 850 MHz ມີ ພັນທະ ດັ່ງນີ້:

1. ເຮັດສັນຍາການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານກັບ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເພື່ອກຳນົດໄລຍະເວລາ, ສິດ, ພັນທະ ແລະ ເງື່ອນໄຂຂອງການນຳໃຊ້ ຕາມການຕົກລົງ ຂອງທັງສອງຝ່າຍ;
2. ປະຕິບັດຕາມກົດໝາຍ, ລະບຽບການຂອງ ສປປ ລາວ ແລະ ລະບຽບການຄຸ້ມຄອງຄື້ນຄວາມຖີ່ ວິທະຍຸສື່ສານສາກົນຂອງ ITU (ITU Radio Regulations, ITU-R Recommendations) ໂດຍ ສະເພາະ ຂໍ້ທີ 5.317A, Resolution 224 ເພື່ອເຮັດໃຫ້ການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານມີ ປະສິດທິພາບ, ປະສິດທິຜົນສູງສຸດ, ສອດຄ່ອງກັບສະພາບການປ່ຽນແປງ ແລະ ການພັດທະນາເຕັກ ໂນໂລຊີການສື່ສານໃນແຕ່ລະໄລຍະ ຢູ່ພາກພື້ນ ແລະ ສາກົນ;
3. ໃຫ້ຄວາມຮ່ວມມືໃນການປະສານງານຄື້ນຄວາມຖີ່ວິທະຍຸສື່ສານທັງພາຍໃນ ແລະ ຕ່າງປະເທດ ພ້ອມທັງຕ້ອງປະຕິບັດຕາມການຕົກລົງຂອງກອງປະຊຸມຄື້ນຄວາມຖີ່ວິທະຍຸສື່ສານໃນແຕ່ລະໄລຍະ;
4. ປະຕິບັດຕາມການປັບປຸງ, ຈັດສັນ ແລະ ຂໍ້ກຳນົດການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໃນແຕ່ລະໄລຍະ;
5. ຮັບປະກັນການແຜ່ກະຈາຍຄື້ນຄວາມຖີ່ວິທະຍຸສື່ສານທີ່ບໍ່ຕ້ອງການ (Unwanted Emission ຊຶ່ງລວມມີ Out of Band Emission ແລະ Spurious Emission) ໃຫ້ເປັນໄປຕາມລະບຽບການ ຂອງສະຫະພາບໂທລະຄົມມະນາຄົມສາກົນ (ITU);

ɣ.

6. ຜູ້ໄດ້ຮັບອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຕ້ອງມີມາດຕະການທາງດ້ານເຕັກນິກທີ່ຮັບປະກັນ ເພື່ອປ້ອງກັນບໍ່ໃຫ້ເກີດຄື້ນຄວາມຖີ່ລົບກວນ ສະຖານີ ຫຼື ຜູ້ນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານອື່ນ.

**ມາດຕາ 7: ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມຄື້ນຄວາມຖີ່, ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນເຈົ້າການ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 8: ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງທີ່ໄດ້ລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

**ລັດຖະມົນຕີ**

ທັນສະໄໝ ກົມມະສິດ